# ກະຊວງກະສິກຳ ແລະ ສິ່ງແວດລ້ອມ

**ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ**

ເງິນກູ້ເລກທີ: IDA No.673580-LA ແລະ IDA No.73590-LA, ລະຫັດໂຄງການ. P178545

**ປະກາດຮັບສະໝັກພະນັກງານ** - Request for Expression of Interest (REOI)

ຕຳແໜ່ງ: **ພະນັກງານ ຮາກຖານບ້ານ ຮັບຜິດຊອບ ວຽກໂພຊະນາການ,**

**ຈຳນວນ 01 ຕຳແໜ່ງ (ຮັບຜິດຊອບ ບ້ານເປົ້າໝາຍຂອງໂຄງການ ຈຳນວນ 5-13 ບ້ານ)**

ບ່ອນປະຈຳການແມ່ນຫ້ອງການກຸ່ມບ້ານ ເປົ້າໝາຍ ຂອງໂຄງການ ປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ເມືອງໜອງແຮດ ແຂວງຊຽງຂວາງ.

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຮັບສະໝັກອາສາສະໝັກຂັ້ນບ້ານ ຮັບຜິດຊອບວຽກໂພຊະນາການ, ຈຳນວນ 01 ຕຳແໜ່ງ ເພື່ອມາປະຈຳຢູ່ຫ້ອງການກຸ່ມບ້ານ ທີ່ເມືອງ ໜອງແຮດ ແຂວງຊຽງຂວາງ ດັ່ງນີ້:
2. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນຜູ້ທີ່ສົນໃຈ ທີ່ມີຄຸນສົມບັດຄົບຖ້ວນຖືກຕ້ອງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຂ້າງລຸ່ມ ***ຍື່ນເອກະສານສະໝັກດ້ວຍຕົນເອງ*** ທີ່ຫ້ອງການ ໂຄງການ ປຊກ ເມືອງໜອງແຮດ ແຂວງຊຽງຂວາງ ຫລື ທາງອີເມວ ສົ່ງມາຕາມທີ່ຢູ່: **info.hr@clearlaos.org** ນີ້ພ້ອມເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນບ່ອນອ້າງອີງ ປະສົບການດ້ານຄວາມຮູ້, ຄວາມສາມາດ ແລະ ປະສົບການ ຂອງທ່ານ ເພື່ອມາຮັບຜິດຊອບເຮັດວຽກດັ່ງກ່າວ:

➢ ຂໍ້ກຳນົດເງື່ອນໄຂເບື້ອງຕົ້ນ ຂອງຜູ້ສະໝັກທີ່ສາມາດຍື່ນສະໝັກໄດ້ ປະກອບມີດັ່ງນີ້:

1) **ອາສາສະໝັກຂັ້ນບ້ານ ຮັບຜິດຊອບວຽກໂພຊະນາການ**

- ລະດັບທາງດ້ານການສຶກສາ: ຕ້ອງຮຽນຈົບຊັ້ນສູງຂຶ້ນໄປ ໃນສາຂາ ວິທະຍາສາດ ດ້ານສຸຂະພາບ / ການແພດ, ດ້ານໂພຊະນາການ, ດ້ານກະສິກຳ ແລະ ດ້ານການພັດທະນາຊຸມຊົນ;
- ຕ້ອງຮູ້ ແລະ ມີປະສົບການ ໃນວຽກງານການສົ່ງເສີມດ້ານໂພຊະນາການ ໃນເຂດຊົນນະບົດ ໂດຍເນັ້ນໃສ່ການປ່ຽນແປງພຶດຕິກຳທາງສັງຄົມ ແລະ ກິດຈະກຳການຜະລິດກະສິກຳ ຕິດພັນກັບໂພຊະນາການ ແລະ ການວາງແຜນແບບມີສ່ວນຮ່ວມໃນຊຸມຊົນ;
- ມີທັກສະ ທາງດ້ານການສື່ສານທາງສັງຄົມ, ການປະສານງານກັບອຳນາດການປົກຄອງທ້ອງຖິ່ນ, ເຮັດວຽກນຳແມ່ຍິງ ແລະ ຊົນເຜົ່າຕ່າງໆ;
- ມີທັກສະ ໃນການນຳໃຊ້ຄອມພິວເຕີຂັ້ນພື້ນຖານ;
- ຮູ້ພາສາທ້ອງຖິ່ນ (ພາສາຊົນເຜົ່າ) ຂອງບ້ານ ທີ່ຈະໄດ້ຮັບຜິດຊອບ ຈະເປັນການດີ;
- ສາມາດເດີນທາງໄປເຮັດວຽກ ແລະ ພັກເຊົາ ຢູ່ບ້ານເປົ້າໝາຍໂຄງການ ທີ່ຈະໄດ້ຮັບຜິດຊອບ;
- ຕ້ອງມີໃບອະນຸຍາດຂັບຂີ່ລົດຈັກ.

➢ ເອກະສານຍື່ນສະໝັກ ປະກອບມີ:

- ໃບຄຳຮ້ອງຍື່ນສະໝັກງານ
- ຊີວະປະຫວັດ: ໃຫ້ລະບຸລະອຽດ ຊື່ ແລະ ນາມສະກຸນ, ເບີໂທລະສັບທີ່ສາມາດຕິດຕໍ່ໄດ້, ອາຍຸ, ຕຳແໜ່ງທີ່ສະໝັກ, ສະຖານທີ່ ທີ່ສະເໜີເຂົ້າປະຈຳການ (ຊື່ເມືອງ, ແຂວງ) ແລະ ລາຍຊື່ ແລະ ເບີໂທ ຂອງຜູ້ສາມາດຢັ້ງຢືນຊີວະປະຫວັດຂອງທ່ານໄດ້ ຈຳນວນ 03 ທ່ານ ເພື່ອທາງໂຄງການສາມາດສອບຖາມໄດ້. ພ້ອມຮູບຖ່າຍຂອງຜູ້ສະໝັກ;
- ສຳເນົາເອກະສານຕ່າງໆທີ່ກ່ຽວຂ້ອງ ເຊັ່ນ: ໃບປະກາດຮຽນຈົບ, ໃບຜ່ານການຝຶກອົບຮົມຕ່າງໆ, ໃບຜ່ານການເຮັດວຽກຜ່ານມາ (ຖ້າມີ), ສຳມະໂນຄົວ ຫລື ບັດປະຈຳຕົວ, ໃບແຈ້ງໂທດ, ໃບຂັບຂີ່ ແລະ ອື່ນໆທີ່ເຫັນວ່າຈຳເປັນ.

3. ຂໍ້ມູນເພີ່ມເຕີມ ລວມທັງຂໍ້ກໍານົດເງື່ອນໄຂການອ້າງອີງຕ່າງໆ ທ່ານສາມາດພົວພັນເອົາໄດ້ ໃນເວລາເຮັດວຽກ ນັບແຕ່ເວລາ 08:00 ໂມງ ຫາ 16:00 ໂມງ, ແຕ່ວັນຈັນ ເຖິງ ວັນສຸກ ທີ່ຫ້ອງການ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ , ຕັ້ງຢູ່ໃນຫ້ອງວ່າການລັດຖະບານ, ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ໂທ: 021 261479.

4. ເອກະສານຍື່ນສະໝັກ ຕ້ອງສົ່ງເປັນລາຍລັກອັກສອນ ດ້ວຍຕົນເອງ ທີ່ຫ້ອງການ ໂຄງການ ປຊກ ເມືອງໜອງແຮດ ແຂວງຊຽງຂວາງ ຫລື ສົ່ງທາງອີເມວ: **info.hr@clearlaos.org** ຫ້ອງການໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຈະພົວພັນຫາຜູ້ທີ່ຖືກຄັດເລືອກທີ່ເໝາະສົມທີ່ສຸດ ທາງອີເມວ/ວອດແອັບ ພາຍຫລັງທີ່ໄດ້ຮັບອະນຸມັດເປັນທາງການ ຈາກໂຄງການ, **ວັນທີປິດຮັບເອກະສານຍື່ນສະໝັກ ແມ່ນວັນທີ 22 ພຶດສະພາ 2026.**

ນະຄອນຫລວງວຽງຈັນ, ວັນທີ 11 ພຶດສະພາ 2026

ຮກ. ຜູ້ອໍານວຍການ

ປອ. ວົງປະພັນ ມະນີວົງ